ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 097 /ທຄຕລ 2020

ນະຄອນຫຼວງວຽງຈັນ, ວັນທີ: 27 NOV 2020

## ໜັງສືເຊີນເຂົ້າຮ່ວມປະມູນ

**ເຖິງ** : ບັນດາບໍລິສັດຮັບເໝົາຕິດຕັ້ງ ແລະ ຈຳໜ່າຍເຄື່ອງໄອທີ.

**ເລື່ອງ**: ແຈ້ງເຊີນເຂົ້າຮ່ວມຍື່ນປະມູນ ລາຄາວຽກງານຕິດຕັ້ງສັນຍານເຕືອນໄພ **ALARM.**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດຕິດຕັ້ງ ແລະ ຈຳໜ່າຍເຄື່ອງໄອທີ ເພື່ອຍື່ນຊອງສະເໜີລາຄາປະເມີນລາຄາວຽກງານຕິດຕັ້ງສັນຍານເຕືອນໄພ **ALARM** ໃຫ້ກັບໜ່ວຍບໍລິການນ້ຳຫງ່າ ສາຂາຊຽງຂວາງ, ສາຂາອຸດົມໄຊ, ສາຂາວັງວຽງ ແລະ ໜ່ວຍບໍລິການກາສີ ສາຂາວັງວຽງ ດັ່ງມີເນື້ອໃນລຸ່ມນີ້:

1. ເງື່ອນໄຂການປະກອບເອກະສານການປະມູນດັ່ງນີ້:
   - ຊອງທີ 1: **ເປີດຊອງ**
   
   ກ. ໃບທະບຽນວິສາຫະກິດ
   
   ຂ. ໃບອະນຸຍາດດຳເນີນທຸລະກິດປີ 2019 ຫຼື 2020
   
   ຄ. ໃບຢັ້ງຢືນການເສຍອາກອນປີລ່າສຸດ ປີ2019)
   
   ຊ. ໃບຢັ້ງຢືນຜົນງານ ແລະ ປະສົບການທີມງານທີ່ມີສີມືສະເພາະ
   - ຊອງທີ 2: ໃບສະເໜີລາຄາລວມອາກອນຕ້ອງເປັນສະກຸນເງິນກີບທີ່ປະກອບສຳເລັດແລ້ວ 1 ຊຸດ **(ປິດຊອງ)**
2. **ການຍື່ນຊອງ:**
   - ຍື່ນເອກະສານດ້ານເຕັກນິກ ແລະ ລາຄາຂອງບໍລິສັດ ມາຍັງ ທຄຕລ ພະແນກຫ້ອງການບໍລິຫານການເງິນ ໃນວັນທີ 21/12/2020 ແລະ ຈະປິດການຮັບຊອງເວລາ 09:00 ໂມງ ຂອງວັນດຽວກັນ.

3. ບໍລິສັດ ສາມາດພົວພັນເອົາເອກະສານປະມູນ ເລີ່ມວັນທີ 30/11/2020, ເວລາ 08:30 - 16:30 ທີ່ ທຄຕລ ສຳນັກງານໃຫຍ່ ພະແນກຫ້ອງການບໍລິຫານ-ການເງິນ, ລາຍລະອຽດເອກກະສານປະກອບມີດັ່ງນີ້:

   ກ. ໃບປະເມີນລາຄາ 1 ຊຸດ.
   
   ຂ. ແບບການຕິດຕັ້ງ 1 ຊຸດ.

4. ສາມາດສອບຖາມລາຍລະອຽດເພີ່ມເຕີມ ກ່ຽວກັບເຕັກນິກການຕິດຕັ້ງສັນຍານເຕືອນໄພ **ALARM** ຈາກວັນທີ 31/11/2020 18/12/2020 ໃນຊ່ວງເວລາ 8:30 - 11:30 ໂມງ ແລະ 13:30 - 16:00 ໂມງ ທີ່ໝາຍເລກໂທລະສັບ 021 213200-414 ຫຼື , ນອກຈາກເວລາດັ່ງກ່າວແລ້ວ ທຄຕລ ຈະຂໍສະຫງວນສິດໃນການຕອບຄຳຖາມໃດໆ ທັງໝົດ.

+ **ໝາຍເຫດ:** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ບໍ່ປະກອບເອກະສານຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

- **ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**
    - **ງວດທີ1:** ຊຳລະ 90% ຂອງມູນຄ່າ ພາຍໃນ 25 ວັນລັດຖະການ ພາຍຫຼັງໄດ້ຕິດຕັ້ງສຳເລັດ.
    - **ງວດທີ2:** ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄໍ້າປະກັນຄຸນະພາບສິນຄ້າ 06 ເດືອນ, ແຕ່ການຮັບປະກັນຄຸນນະພາບສິນຄ້າ ຕ້ອງແມ່ນຕາມໄລຍະເວລາຂອງສິນຄ້າດັ່ງກ່າວ ທີ່ຜູ້ສະໜອງແຈ້ງເບື້ອງຕົ້ນ, ຖ້າຫາກຜູ້ສະໜອງເມີນເສີຍ ບໍ່ເຂົ້າມາສ້ອມແປງບຳລຸງຮັກສາ ແມ່ນ ທຄຕລ ຈະປັບໄໝ 20% ຂອງມູນຄ່າ.

ດັ່ງນັ້ນ ຈຶ່ງແຈ້ງເຊີນມາຍັງບັນດາ ບໍລິສັດ ເພື່ອຍື່ນຊອງສະເໜີລາຄາຕາມທີ່ກ່າວມາຂ້າງເທິງນັ້ນດ້ວຍ.

**ປະທານຄະນະກຳມະການປະມູນ**

ທະນາຄານການຄ້າຕ່າງປະເທດລາວມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ບັນທະລາດ ແກ້ວປະເສີດ

**ສອບຖາມລາຍລະອຽດເພີ່ມເຕີມ**: bidcommittee@bcel.com.la
ທ້າວ ເພັດສະໝອນ ແສງຕະກຸນ 020 77467722
ທ້າວ ສຸລິສັກ ສິນລາດຊະວົງ 020 23344556